

# ການສະເໜີຕັ້ງຊື່ໃຫ້ຕົ້ນດອກກຸຫຼາບພື້ວ

ໄລຍະເວລາໃກ້ໆນີ້, ດອກກຸຫຼາບພື້ວຂອງຈີນ ແນວພັນໃໝ່ໝາຍເລກ 4379-4, ຍ້ອນວ່າເປັນຊື່ທີ່ທຳມະດາຕິດດິນຫຼາຍ ---- ທີ່ຊື່ວ່າ "ປາວຮວາ" (Baohua), ຈຶ່ງໄດ້ໂດ່ງດັງຢ່າງໄວວາຢູ່ອິນເຕີເນັດ. ຊື່ນີ້ແມ່ນມາຈາກຊື່ລຸງຜູ້ທີສອງຂອງຊາວເນັດຜູ້ໜຶ່ງ. ຊື່ເອີ້ນທຳມະດາອັນໜຶ່ງ, ເປັນຈັ່ງໃດຈຶ່ງເກີດການກະທົບກັບການຄົ້ນຄວ້າວິທະຍາສາດກະສິກຳໄດ້ແນວໃດ? ໃນທີ່ສຸດຈຶ່ງສາມາດສ້າງຄວາມປະທັບໃຈໃຫ້ກັບຜູ້ຊ່ຽວຊານດ້ານການເພາະພັນໄດ້? ຂໍໃຫ້ພວກເຮົາມາພ້ອມກັນກ້າວໄປສູ່ເລື່ອງລາວເບື້ອງຫຼັງຂອງ "ກຸຫຼາບພື້ວປາວຮວາ" ນີ້ນຳກັນເນາະ.



## ກຸຫຼາບພື້ວ "ປາວຮວາ" ແມ່ນຊື່ຂອງລຸງຜູ້ທີສອງຂອງຂ້ອຍ

ຢູ່ສູນຄົ້ນຄວ້າດອກໄມ້ ສະຖາບັນວິທະຍາສາດກະສິກຳແຂວງຢຸນນານ, ທີມງານວິໄຈຂອງ ສາຍຢຽນເຟີຍ (Cai Yanfei) ກຳລັງປະເຊີນກັບ"ພາລະອັນຫອມຫວານ". ປີມໍ່ໆມານີ້, ພວກເຂົາໄດ້ສຳເລັດການເພາະປູກກຸຫຼາບພື້ວຫຼາຍແນວພັນໃໝ່ ແລະ ດີເລີດ, ຢ່າງໃດກໍດີການຕັ້ງຊື່ໃຫ້ແກ່ "ແອນ້ອຍຈາກການວິໄຈທາງວິທະຍາສາດ" ເຫຼົ່ານີ້ ໃຫ້ມີທັງຄວາມໝາຍ ແຝງທັງທາງວັດທະນະທຳ ແລະ ຕະຫຼາດທີ່ຈື່ຈຳໄດ້ນັ້ນ ແມ່ນມີຄວາມສຳຄັນພໍໆກັນກັບການເພາະພັນພວກມັນຂຶ້ນມາເຊັ່ນກັນ.

ເດືອນທັນວາຂອງປີກາຍ, ທີມງານມອບໝາຍໃຫ້ບລັອກເກີວິທະຍາສາດຍອດນິຍົມເປີດຕົວກິດຈະກຳການຕັ້ງຊື່ໃນສື່ສັງຄົມອອນລາຍ. ເລີ່ມທຳອິດ ຊາວເນັດໄດ້ປະກອບສ່ວນຊື່ທີ່ມີຄວາມໝາຍທາງບົດກະວີຢ່າງຫຼວງຫຼາຍ, ແຕ່ເຖິງແນວໃດກໍດີ ມີຊາວເນັດໜຶ່ງຄົນໄດ້ເປີດ "ຊ່ອງທາງແຂ່ງຂັນໃໝ່" ທາງໜຶ່ງຂຶ້ນເພື່ອຕັ້ງຊື່, ເອີ້ນວ່າ: "ກຸຫຼາບພື້ວຫຼືປາວຮວາ, ເພາະວ່າລຸງຜູ້ທີສອງຂອງຂ້ອຍຊື່ວ່າ ຫຼີປາວຮວາ." ຂໍ້ຄວາມສະເໜີນີ້ແຝງມີຄວາມອົບອຸ່ນຂອງຄອບຄົວ, ເຊິ່ງມັນໄດ້ຕິດແປວໄຟແຫ່ງພື້ນທີ່ສະແດງຄວາມຄິດເຫັນຢ່າງໄວວາ ແລະ ໃນຕໍ່ມາກໍເລີ່ມມີເວທີການລົງຄະແນນສຽງເກີດຂຶ້ນ, "ດອກກຸຫຼາບພື້ວປາວຮວາ" ມີຈຳນວນຄະແນນສຽງນຳໜ້າຢູ່ຕະຫຼອດ.

ເປັນຫຍັງຈຶ່ງແມ່ນ "ປາວຮວາ"? ຊາວເນັດທີ່ສະເໜີນັ້ນເວົ້າວ່າ ລຸງຜູ້ທີສອງ "ເຕີບໃຫຍ່ຂຶ້ນມາຄືກັນກັບດອກໄມ້", ເຊິ່ງຊວນໃຫ້ຄິດເຖິງຜູ້ອາວຸໂສທີ່ໝັ້ນແກ່ນ ແລະ ລຽບງ່າຍ ທີ່ມັກພົບພໍ້ຢູ່ໃນຫຼາຍຄອບຄົວ, ເປັນຄົນທຳມະດາ ທີ່ຢັ່ງຮາກເລິກລົງໃນດິນແດນແຫ່ງຊີວິດຢ່າງງຽບໆ ແລະ ເບັ່ງບານອອກມາຢ່າງແຂງແຮງໜັກແໜ້ນ. ຊາວເນັດບາງຄົນກໍໄດ້ໃຊ້ໂອກາດນີ້ ຄິດຮອດຍາດພີ່ນ້ອງຂອງເຂົາເຈົ້າ: "ພໍ່ຂອງຂ້ອຍກໍຊື່ປາວຮວາ, ຂ້ອຍຫວັງວ່າ ເມື່ອດອກກຸຫຼາບພື້ວປາວຮວາອອກສູ່ຕະຫຼາດນັ້ນ ຂ້ອຍກໍຈະສາມາດມີມັນແລ້ວໜຶ່ງຕົ້ນ, ນັ້ນກໍແມ່ນແນວຄິດຂອງຂ້ອຍ". ສາມາດເວົ້າໄດ້ວ່າ ຊາວເນັດທັງຫຼາຍບໍ່ພຽງແຕ່ເລືອກຊື່ເທົ່ານັ້ນ, ແຕ່ຍັງໄດ້ສຳເລັດການສະແດງອອກເຖິງຄວາມຮູ້ສຶກຄວາມຮັກໃນຄອບຄົວ ແລະ ຄ່ານິຍົມທົ່ວໄປອີກ.

ທີມງານຄົ້ນຄວ້າເພາະພັນກຸຫຼາບພື້ວພັນໃໝ່ນີ້ ເຫັນວ່າ "ປາວຮວາ" ມີຄວາມໝາຍທີ່ສວຍງາມຂອງ "ອູ້ຮວາທ່ຽນປາວ-ສົມບັດຂອງທຸກສິ່ງ", ສະນັ້ນ ຈຶ່ງຮັບເອົາຂໍ້ສະເໜີນີ້. ຕົ້ນເດືອນມັງກອນ 2026, ກຸຫຼາບພື້ວ "ປາວຮວາ" ໄດ້ຜ່ານການກວດຜ່ານເບື້ອງຕົ້ນຂອງສຳນັກງານປ່າໄມ້ແລະທົ່ງຫຍ້າແຫ່ງລັດຂອງຈີນ, ເຊິ່ງໝາຍຄວາມວ່າຊື່ຂອງຄົນທຳມະດາຈະຖືກ "ບັນທຶກໄວ້ໃນປະຫວັດສາດ".



## ດອກໄມ້ສີເຫຼືອງນີ້ ກໍເອີ້ນວ່າ "ເຫວີນຊິ້ວ" ຕິເນາະ

ໃນວິດີໂອອື່ນຂອງການສະເໜີຕັ້ງຊື່ກຸຫຼາບພື້ວພັນໃໝ່, ຕົວເອກຄືຕົ້ນກຸຫຼາບພື້ວສີເຫຼືອງ ໝາຍເລກ 775-1, ເນື້ອທີ່ສະແດງຄວາມຄິດເຫັນໄດ້ຖືກປັດເຂົ້າສູ່ "ຮວງເຫວີນຊິ້ວ-ເຫວີນຊິ້ວສີເຫຼືອງ" (Huang Wenxiu). ຊາວເນັດຫຼາຍໝື່ນຄົນເຕັມໄປດ້ວຍຄວາມເຄົາລົບ ແລະ ຄຳຊື່ນຊົມ ສະໜັບສະໜູນດ້ວຍຄວາມຮັກ ໂດຍຕັ້ງຊື່ດອກໄມ້ສີເຫຼືອງເຮືອງຕານີ້ວ່າ "ກຸຫຼາບພື້ວເຫວີນຊິ້ວ".

ຮວງເຫວີນຊິ້ວ ແມ່ນພະນັກງານປະຈຳການຢູ່ບ້ານຜູ້ໜຶ່ງ, ຫຼັງຈາກຮຽນຈົບປະລິນຍາໂທ ກໍປະຖິ້ມໂອກາດເຮັດວຽກງານຢູ່ໃນເມືອງໃຫຍ່ໂດຍບໍ່ລັ່ງເລໃຈ ແລ້ວກັບຄືນສູ່ບ້ານເກີດເຮັດວຽກຢູ່ນະຄອນປາຍເຊີ ກວາງຊີ. ເດືອນມີນາ 2018 ລາວເປັນເຈົ້າການຍື່ນໄປເປັນເລຂາທີໜຶ່ງປະຈຳການຢູ່ບ້ານຂອງບ້ານປາຍຕີ້ ເມືອງເລີເຢ້, ປະຈຳການຢູ່ບ້ານສອງເດືອນ ລາວໄດ້ຍ່າງເດີນໄປທົ່ວທັງ 195 ຄອບຄົວທຸກຍາກຂອງໝົດບ້ານ, ປະຈຳການຢູ່ບ້ານໜຶ່ງປີກວ່າ ໄດ້ນຳພາ 418 ຄົນຂອງ 88 ຄອບຄົວ ຫຼຸດພົ້ນອອກຈາກຄວາມທຸກຍາກ. ຕອນເຊົ້າໆມື້ໜຶ່ງໃນປີ 2019 ລາວປະສົບໄພນ້ຳໄຫຼຊຸໃນເວລາເດີນທາງກັບເລີເຢ້ ຈາກປາຍເຊີ, ແລະໜ້າເສຍໃຈທີ່ເສຍຊີວິດໃນໄວພຽງແຕ່ 30 ປີ.

ຫຼັງຈາກເຂົ້າໃຈເຖິງສຽງຮຽກຮ້ອງຂອງຊາວເນັດ, ສາຍ ແຢ້ນເຟີຍ ຕອບຢ່າງໄວວ່າ "ເຫວີນຊິ້ວ" ໄດ້ຖືກເລືອກແລ້ວ! ໃນຖານະທີ່ເປັນນັກຄົ້ນຄວ້າທາງວິທະຍາສາດຜູ້ຍິງຜູ້ໜຶ່ງ ສາຍແຢ້ນເຟີຍ ກ່າວວ່າ: "ເລຂາເຫວີນຊິ້ວແມ່ນຜູ້ຍິງທີ່ຍິ່ງໃຫຍ່ຜູ້ໜຶ່ງ ກໍເປັນແບບຢ່າງໃນໃຈຂອງຂ້າພະເຈົ້າ!" ວຽກງານທີ່ເຫວີນຊິ້ວເຮັດ ແມ່ນຮັບໃຊ້ຮາກຖານ, ປະຈຳການຢູ່ບ້ານ. ພວກເຮົາເຮັດວຽກກະສິກຳ ເຕັກນິກວິທະຍາສາດຊ່ວຍຊູຊາວກະສິກອນ, ໃນທີ່ສຸດແລ້ວພວກເຮົາລ້ວນແຕ່ຕ້ອງຊ່ວຍເຫຼືອຊາວກະສິກອນ, ຊ່ວຍເຫຼືອບ້ານຊົນນະບົດ, ຂ້າພະເຈົ້າຮູ້ສຶກວ່ານັ້ນແມ່ນວຽກທີ່ພວກເຮົາເຮັດ, ໃນຄວາມຈິງແລ້ວ ມີຄວາມຮູ້ສຶກແນວໜຶ່ງວ່າພວມເດີນໄປສູ່ຈຸດໝາຍປາຍທາງອັນດຽວກັນ.



## "ຈຽວຫຼົງ" ດອກໄມ້ທີ່ເບັ່ງບານເພື່ອຄວາມສຸກຂອງປະຊາຊົນ

ເດືອນມັງກອນ ປີນີ້, ດອກກຸຫຼາບພື້ວ "ຊົບຈີນ" ໝາຍເລກ 4815-27 ກໍໄດ້ຮັບການສະເໜີຕັ້ງຊື່ເປັນເວລາໜຶ່ງເດືອນ.ໃນເວລາກ່ອນສອງມື້ຂອງການເລີ່ມຕົ້ນສະເໜີການຕັ້ງຊື່, ເຂດປົກຄອງຕົນເອງເຜົ່າອຸຍກູ ຊິນຈຽງ ທີ່ຢູ່ຫ່າງໄກເປັນພັນລີ້ຈາກແຂວງຢຸນນານ, ມີຊື່ໜຶ່ງໄດ້ກະຕຸ້ຈິດໃຈຂອງຄົນເປັນຮ້ອຍລ້ານຄົນ. ເຮີ ຈຽວຫຼົງ (He Jiaolong) "ເຈົ້າເມືອງທີ່ມີຊື່ສຽງໃນອິນເຕີເນັດ" ທີ່ເຄີຍນຸ່ງເຄື່ອງສີແດງຂີ່ມ້າຢູ່ທົ່ງທີມະຜູ້ນັ້ນ ທັງເປັນຫົວໜ້າສູນການບໍລິການຈຳໜ່າຍ-ກໍ່ສ້າງຜະລິດຕະພັນກະສິກຳທ້ອງຖິ່ນຊິນຈຽງ, ໂຊກບໍ່ດີໄດ້ເສຍຊີວິດໃນເວລາປະຕິບັດງານ ລວມອາຍຸໄດ້ 47 ປີ.

ເວລາສັ້ນໆບໍ່ເທົ່າໃດມື້, ຊື່ທີ່ວ່າ "ຈຽວຫຼົງ"ນີ້, ໄດ້ກາຍເປັນການເລືອກຮ່ວມກັນໃນອິນເຕີເນັດ ດ້ວຍທ່າທາງແບບ "ນຳໜ້າຢ່າງຂາດຕົວ". ຫ້ອງຮຽນວຽກງານແຂ່ງຂັນແຮງງານຜະລິດດອກໄມ້ແຂວງຢຸນນານ ແລະ ສະຖາບັນຄົ້ນຄວ້າດອກໄມ້ຂອງວິທະຍາໄລວິທະຍາສາດກະສິກຳແຂວງຢຸນນານ ຕົກລົງຢຸດກິດຈະກຳການສະເໜີຕັ້ງຊື່ກຸຫຼາບພື້ວພັນໃໝ່ເທື່ອນີ້ລ່ວງໜ້າ, ແລະກໍານົດເອົາຊື່ "ຈຽວຫຼົງ"ນີ້ຢ່າງເປັນທາງການ.

ດັ່ງທີ່ພະນັກງານກ່າວວ່າ: "ຄວາມອ່ອນໂຍນ ແລະ ແຂງແຮງ ຂອງຕົ້ນກຸຫຼາບພື້ວນີ້ ແມ່ນຄ້າຍຄືກັບຮູບຮ່າງຂອງ ເຮີ ຈຽວຫຼົງ! ຈຽວ ເປັນທ່າທາງຂອງດອກໄມ້ ແລະມັນກໍເປັນຄວາມອ່ອນໂຍນຂອງລາວ ໃນຖານະຜູ້ຍິງນຳອີກ; ຫຼົງ ແມ່ນຄວາມແຂງແຮງຂອງດອກໄມ້ ແລະ ຍັງເປັນຄວາມໝັ້ນຄົງຂອງລາວທີ່ຢັ່ງຮາກຢູ່ເຂດຊາຍແດນ."

(ສະໜອງຂໍ້ມູນໂດຍ: ວາລະສານ "ຈຳປາ" ທີ່ຂຶ້ນກັບສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

**ອ່ານເພີ່ມຕື່ມ**

### ດອກໄມ້ຢຸນນານ "ກ້າວສູ່ຄວາມໃໝ່" ທັງ "ກ້າວສູ່ແກນກາງ"

ປີ 2024 ທີມງານຂອງສາຍແຢ້ນເຟີຍ ໄດ້ເປີດຕົວກຸຫຼາບພື້ວຊຸດ "ແບບຂອງຈີນ" 76 ຕົ້ນດີເລີດ/ສາຍພັນໃໝ່ອອກມາເປັນເທື່ອທຳອິດ, ເຊິ່ງໄດ້ຮັບການຕອບຮັບເປັນຢ່າງດີຈາກຕະຫຼາດ. ພຶດສະພາ 2025 ໄດ້ເປີດຕົວອີກ 1000 ກ່ວາ ຕົ້ນດີເລີດ/ແນວພັນໃໝ່ຂອງດອກກຸຫຼາບພື້ວ "ແບບຂອງຈີນ". ຈຳນວນແນວພັນໃໝ່ສຳເລັດການເພີ່ມຂຶ້ນຫຼາຍເທົ່າແບບທະວີຄູນ. ຮອດດຽວນີ້ ຢຸນນານໄດ້ພັດທະນາເປັນສູນການເພາະພັນກ້າຕົ້ນເບ້ຍດອກໄມ້ໃຫຍ່ທີ່ສຸດຂອງຈີນ. ແຫຼ່ງທີ່ມາຂອງປະເພດແນວພັນດອກໄມ້ປະດັບເບິ່ງຊົມ ເກືອບ 1/3 ຂອງທົ່ວໂລກ ແມ່ນມາຈາກຢຸນນານ. ຈົນຮອດທ້າຍປີ 2024 ແຂວງຢຸນນານຍື່ນສະເໜີສະໝັກແນວພັນໃໝ່ຫຼາຍກ່ວາ 1100 ລາຍການ, ໄດ້ຮັບການອະນຸມັດລະດັບຊາດ 800 ກ່ວາລາຍການ, ຄວາມສາມາດປະດິດສ້າງແນວພັນໃໝ່ ຈັດຢູ່ໃນອັນດັບໜຶ່ງຂອງປະເທດ.

